# ໂຄງການ “ສ້າງຮອຍຍິ້ມດ້ວຍການແບ່ງປັນ” ປີ 4
# ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ວັນທີ 21 ສິງຫາ 2020 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ລົງມອບອຸປະກອນການຮຽນການສອນ ໃຫ້ແກ່ນັກຮຽນ ແລະ ຄູອາຈານ ໂຮງຮຽນປະຖົມ ບ້ານ ນ້ຳຝົດ ແລະ ໂຮງຮຽນປະຖົມ ບ້ານ ນາສັງທອງ, ເມືອງກາສີ ແຂວງວຽງຈັນ ປະກອບມີ ປຶ້ມແບບຮຽນ, ປຶ້ມນິທານ, ແຜ່ນພະຍັນຊະນະ, ແຜ່ນໂຕເລກ ນອກຈາກນີ້, ຍັງມີ ອຸປະກອນກິລາເຊັ່ນ: ໝາກບານເຕະ, ບານສົ່ງ, ກະຕໍ້, ຊຸດໄມ້ຕີດອກປີກໄກ່, ເສື້ອກັກນັກກິລາ, ຕາໜ່າງໂກນບານ ພ້ອມທັງ ອຸປະກອນສິ່ງເສີມສີລະປະເຊັ່ນ: ກອງຫາງ, ແຊ່ງ. ໃນການເດີນທາງໄປມອບເຄື່ອງຊ່ວຍເຫຼືອຄັ້ງນີ້ ນຳພາໂດຍ ທ່ານ ພັນໂນລາ ສຸຄະບັນດິດ ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີມະຫາຊົນ. ເນື່ອງຈາກໃກ້ເປີດ ສົກຮຽນແລ້ວອຸປະກອນທີ່ມອບໃຫ້ໂຮງຮຽນ ແລະ ນ້ອງໆນັກຮຽນ ຈະຊ່ວຍເພີ່ມທັກສະຄວາມຮູ້ ແລະ ເປັນເຄື່ອງມືທີ່ ຊ່ວຍໃຫ້ການຮຽນ-ການສອນງ່າຍຂຶ້ນ.








